# ແຜນການສອນ
## ບົດຮຽນໂຮງຮຽນວັນອາທິດ
## ວັນອາທິດ ທີ 23 ມີນາ 2008 ( 03-23-2008 )

---

## ດຳຣົງຊີວິດ 3:16- ມີຊີວິດຢູ່ໂດຍຣິດອຳນາດ:

**ຂໍ້ພຣະຄັມພີໃນບົດຮຽນ:** (ເອເຟໂຊ 1:18-21; 2:4-9; 3:16-21)
**ຄຳຖາມແຫ່ງຊີວິດ:** ເປັນຫຍັງການຄືນພຣະຊົນຂອງພຣະເຢຊູຈຶ່ງມີຄວາມໝາຍຕໍ່ຂ້າພະເຈົ້າ?
**ຄວາມຈິງໃນພຣະຄັມພີ:** ການຊົງບັນດົນໃຫ້ພຣະເຢຊູຄຣິດຟື້ນພຣະຊົນ ພຣະເຈົ້າໄດ້ຊົງສຳແດງຣິດອຳນາດອັນຍິ່ງໃຫຍ່ ທີ່ພຣະອົງຊົງປະທານໃຫ້ຜູ້ທີ່ເຊື່ອທາງພຣະວິນຍານໃນການດຳຣົງຊີວິດ.
**ຜົນສະທ້ອນຕໍ່ຊີວິດ:** ບົດຮຽນນີ້ໄດ້ຂຽນຂຶ້ນເພື່ອຊ່ວຍທ່ານໃຫ້ດຳຣົງຊີວິດໃນແຕ່ລະວັນດ້ວຍຄວາມໝັ້ນໃຈ ແລະມີຄວາມຫວັງໂດຍ:

- ພົບວ່າການຟື້ນພຣະຊົນຂອງພຣະເຢຊູໝາຍເຖິງ ພຣະເຈົ້າຊົງປະທານຊີວິດໃໝ່ໃຫ້ຜູ້ທີ່ເຊື່ອດ້ວຍຣິດອຳນາດອັນຍິ່ງໃຫຍ່ໃນການດຳເນີນຊີວິດ ແລະ
- ຕັດສິນໃຈທີ່ຈະຮັບເອົາຊີວິດໃໝ່ນັ້ນໂດຍເຊື່ອວ່າພຣະເຢຊູຊົງເປັນພຣະຜູ້ໂຜດໃຫ້ພົ້ນ.

### ການຈັດຕຽມຂອງຄຣູ

1. ອະທິຖານຂໍການຊົງນຳຈາກອົງພຣະວິນຍານບໍຣິສຸດ ກ່ອນເລີ້ມສຶກສາພຣະຄັມພີແລະບົດຮຽນ
2. ສຶກສາຂໍ້ພຣະຄັມພີທີ່ໃຊ້ໃນບົດຮຽນນີ້ ດ້ວຍການຕຶກຕອງ, ພິຈາຣະນາ
3. ສຶກສາບົດຮຽນຂອງນັກຮຽນ ເພື່ອຈະໄດ້ເຂົ້າໃຈແຈ້ງໃນບົດຮຽນທີ່ຈະນຳໄປສອນ
4. ອ່ານ "<u>ແຜນການສອນ</u>", ຫມາຍບ່ອນສຳຄັນໄວ້, ປັບປຸງ, ແກ້ໄຂ, ຖ້າມີເຣື່ອງປະກອບຫລືຕົວຢ່າງກໍຈົດບັນທຶກໄວ້
5. ເຮັດກອບປີ້(ສຳເນົາ) ບົດຮຽນຂອງນັກຮຽນ ໃຫ້ພຽງພໍກັບຈຳນວນນັກຮຽນ

### ແຜນການສອນ

1. ແຈກຢາຍບົດຮຽນຂອງນັກຮຽນ ໃຫ້ນັກຮຽນທຸກຄົນ
2. ສຳຣວດຈຳນວນນັກຮຽນ ຖາມຂ່າວຫາຜູ້ຂາດເພື່ອຈະໄດ້ສົ່ງຂ່າວຫາແລະອະທິຖານເພື່ອ
3. ຖາມນັກຮຽນວ່າເຂົາເຈົ້າໄດ້ຮຽນເຣື່ອງຫຍັງໃນວັນທິດທີ່ຜ່ານມາ ເພື່ອລື້ມຄືນຄວາມຊົງຈຳ
4. ໃຫ້ນັກຮຽນຄົນນຶ່ງແບ່ງປັນ 2-3 ນາທີ ຈາກປະສົບການຊີວິດກັບພຣະເຈົ້າໃນອາທິດທີ່ຜ່ານມາ, ຄຳພຍານສັ້ນໆ
5. ອະທິຖານເປີດຫ້ອງຮຽນ, ເພື່ອການຮຽນແລະຜູ້ຂາດການຮຽນມື້ນີ້ ແລະເລີ້ມຕົ້ນໃນການສອນ

<u>**ແນະນຳ:**</u>

- ຊີ້ໃຫ້ເຫັນວ່າ ພວກເຮົາດຳຣົງຢູ່ໃນໂລກທີ່ຄົນທັງຫລາຍພຍາຍາມດຳຣົງຊີວິດດ້ວຍຕົນເອງ, ເຂົາຕ້ອງການທີ່ຈະຄວບຄຸມນ້ຳໜັກຕົນເອງ, ຄວບຄຸມລູກ ແລະເລືອກທົນທາງໃຫ້ລູກຂອງເຂົາ, ແລະພີ່ນ້ອງຂອງເຂົາດ້ວຍ.
- ຕລອດທັງມີການຂັດແຍ່ງກັບທາງອຳນາດຂອງເຈົ້າໜ້າທີ່ການປົກຄອງດ້ວຍເຊັ່ນດຽວກັນ.

## 1. ຣິດອຳນາດອັນຍິ່ງໃຫຍ່: ( ເອເຟໂຊ 1:18-21)

- ຂໍໃຫ້ນັກຮຽນອາສາສມັກອ່ານ ເອເຟໂຊ 1:18-21 .
- ໃຫ້ນັກຮຽນແບ່ງປັນຕົວຢ່າງຂອງການປະສົບການດຳເນີນຊີວິດທີ່ມີຄວາມຮູ້ສຶກວ່າປາສະຈາກຣິດອຳນາດ. ສົນທະນາເຣື່ອງຄວາມສຳຄັນຂອງການເຂົ້າໃຈ ແລະການຮູ້ຈັກຣິດອຳນາດຂອງພຣະເຈົ້າໃນຊີວິດ. ຊີວິດຂອງແຕ່ລະຄົນມີຄວາມແຕກຕ່າງກັນຢ່າງໃດໃນເມື່ອມາເຊື່ອໃນພຣະເຈົ້າແລ້ວຊີວິດມີການປ່ຽນແປງຢ່າງໃດ. ຣິດອຳນາດຂອງພຣະເຈົ້າໄດ້ສ່ອງເຂົ້າໄປໃນຊີວິດຂອງບັນດາຜູ້ທີ່ເຊື່ອໃຫ້ຮູ້ຈັກພຣະເຈົ້າດີຂື້ນຢ່າງໃດ ແລະການຮັບໃຊ້ພຣະເຈົ້າຕາມແບບຢ່າງຂອງພຣະເຈົ້າໃຫ້ໄປເຖິງຈິດວິນຍານຂອງຄົນອື່ນດ້ວຍຢ່າງໃດ.
- ສົນທະນາເຖິງຫລັກຖານ ແລະຢັ້ງຢືນໃນການຟື້ນພຣະຊົນທີ່ມີອຳນາດໃນການທຳງານຂອງບັນດາຜູ້ທີ່ເຊື່ອໃນສມັຍປະຈຸບັນນີ້. ໃຫ້ນັກຮຽນຊອກຫາຫລັກຖານທີ່ຜູ້ຄົນມີຄວາມສົນໃຈໃນ ພຣະທັມ ໂຣມ 1:7;
- 1 ໂກຣິນໂທ 1:1; 1 ເປໂຕ2:5,9 ໃນປຶ້ມພຣະຄັມພີຂອງເຂົາເຈົ້າ.

<u>ຄຳຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະທັມ:</u> (ເອເຟໂຊ 1:18-21)

1. ໃນພຣະຄຳຕອນນີ້ໂປໂລໄດ້ອະທິຖານເພື່ອບັນດາຜູ້ທີ່ເຊື່ອໃນເມືອງເອເຟໂຊຢ່າງໃດ?
2. ການທີ່ໃຫ້ທ່ານມີຕາໃຈນັ້ນໝາຍຄວາມວ່າແນວໃດ?
3. ທ່ານຈະບັນລະຍາຍເຣື່ອງຣິດອຳນາດທີ່ໂປໂລຂຽນໄວ້ນີ້ໃຫ້ກັບຜູ້ທີ່ເຊື່ອຄົນອື່ນ ໆ ແລະຜູ້ທີ່ບໍ່ເຊື່ອຢ່າງໃດ?
4. ແມ່ນຫຍັງທີ່ເປັນຫລັກຖານ ແລະເປັນເຄື່ອງຊີ້ບອກຂອງຣິດອຳນາດຂອງພຣະເຈົ້າທີ່ທຳງານຢູ່ໃນບັນດາຜູ້ທີ່ເຊື່ອທັງຫລາຍ?

## 2. ຣິດອຳນາດທີ່ຊ່ອຍໃຫ້ລອດພົ້ນ: (ເອເຟໂຊ 2:4-9)

- ຂໍໃຫ້ອາສາສມັກອ່ານພຣະທັມ ເອເຟໂຊ 2:4-9
- ໃຫ້ຂີດເປັນສອງຄໍລັມໃສ່ກະດານ, ຂຽນ **ຕາຍ** ໃສ່ຄໍລັມທີນຶ່ງ, ຂຽນ **ຍັງມີຊີວິດຢູ່** ໃສ່ໃນຄໍລັມທີສອງ. ອະທິບາຍໃຫ້ແຈ່ມແຈ້ງແກ່ນັກຮຽນວ່າມີຄວາມໝາຍຫຍັງສຳລັບຕາຍທາງຝ່າຍຈິດວິນຍານ ຫລືຈິດວິນຍານທີ່ຍັງເປັນຢູ່.
- ອະທິບາຍ: ພວກເຮົາຕາຍຕໍ່ຄວາມຜິດບາບ, ການລ່ວງລະເມີດ ແລະສົມຄວນໄດ້ເຂົ້າສູ່ການພິພາສາ. ພວກເຮົາເປັນຂ້ອຍຂ້າຂອງຄວາມຜິດບາບ ແລະຊາຕານ, ໄດ້ຫລົງຕິດຕາມຊາຕານແທນການຕິດຕາມພຣະເຈົ້າ ແລະພວກເຮົາສົມຄວນຖືກພຣະພິໂຣດຂອງພຣະເຈົ້າ ( ເອເຟໂຊ 2:2-3) ແຕ່ພຣະເຈົ້າບໍ່ຊົງໃຫ້ພວກເຮົາໄດ້ຮັບໃນສິ່ງທີ່ພວກເຮົາໄດ້ເຮັດມາ,ພຣະອົງຊົງມີພຣະກະຣຸນາພວກເຮົາດ້ວຍຄວາມຮັກຂອງພຣະອົງ. ພຣະເຈົ້າບໍ່ພຽງແຕ່ບໍ່ລົງໂທດໃນການກະທຳຂອງພວກເຮົາເທົ່ານັ້ນ, ແຕ່ພຣະອົງຍັງໄດ້ຊົງປະທານຄວາມລອດພົ້ນໃຫ້ແກ່ພວກເຮົາໂດຍທີ່ພວກເຮົາບໍ່ໄດ້ຮັບໃຊ້. ພວກເຮົາໄດ້ຮັບຄວາມລອດພົ້ນໂດຍພຣະຄຸນຊຶ່ງເປັນມາໂດຍທາງພຣະເຢຊູຄຣິດເປັນຄືຜູ້ທີ່ໄດ້ຊົງກະທຳແທນພວກເຮົາ.

<u>ຄຳຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະທັມ:</u> (ເອເຟໂຊ 2:4-9)

1. ການທີ່ລອດພົ້ນໂດຍພຣະຄຸນນັ້ນໝາຍຄວາມວ່າແນວໃດ?
2. ທ່ານຈື່ໄດ້ບໍ່ວ່າເວລາໃດທີ່ທ່ານຕ້ອງການພຣະຄຸນຂອງພຣະເຈົ້າ ແລະຄວາມລອດພົ້ນຈາກພຣະເຢຊູຄຣິດ?
3. ພຣະເຈົ້າມີຄວາມເມດຕາ ແລະມີຄວາມຮັກອັນຍິ່ງໃຫຍ່ຕໍ່ຊີວິດຂອງທ່ານໃນທຸກມື້ນີ້ຫລາຍປານໃດ?

4. ແມ່ນຫຍັງທີ່ຂັດຂວາງແລະເຮັດໃຫ້ທ່ານມີຄວາມຫຍຸ້ງຍາກໃນການແບ່ງປັນຄວາມເຊື່ອຂອງທ່ານ ແລະບອກເຣື່ອງການຟື້ນພຣະຊົນຂອງພຣະເຢຊູຄຣິດໃຫ້ກັບຄົນອື່ນ ໆ ?

## 3. ຣິດອຳນາດແຫ່ງພຣະວິນຍານ: (ເອເຟໂຊ 3:16-21)

- ຂໍໃຫ້ອາສາສມັກອ່ານພຣະທັມ ເອເຟໂຊ 3:16-21
- ຊີ້ໃຫ້ເຫັນເຖິງບັນດາຜູ້ທີ່ເຊື່ອໃນຄຳໝັ້ນສັນຍາທີ່ມີປະສົບການກັບພຣະເຈົ້າ ແລະມີຄວາມຮູ້ຈັກພຣະເຈົ້າເປັນຢ່າງດີ ຊຶ່ງພຣະອົງຊົງເປີດເຜີຍພຣະອົງເອງໃຫ້ເຂົາເຈົ້າ.ພຣະເຈົ້າຈະເພີ້ມເຕີມທຸກສິ່ງທີ່ດີໃຫ້ແກ່ພວກເຮົາດ້ວຍລາງວັນ ແລະພຣະຄຸນ ພຣະອົງຊົງເຫັນໃນສິ່ງທີ່ພວກເຮົາຕ້ອງການ, ອັນນີ້ແມ່ນທຸກສິ່ງທີ່ເກີນຄວາມເຂົ້າໃຈຂອງພວກເຮົາ.
- ໃນພຣະທັມເອເຟໂຊ 3:16-21 ໂປໂລໄດ້ອະທິຖານເພື່ອບັນດາຜູ້ທີ່ເຊື່ອທັງຫລາຍ ຊຶ່ງລາວຮູ້ວ່າເປັນພຣະປະສົງຂອງພຣະເຈົ້າ. ພຣະເຈົ້າຊົງມີພຣະປະສົງຢາກໃຫ້ຜູ້ທີ່ເຊື່ອປະສົບການໝັ້ນຄົງກັບພຣະວິນຍານ ແລະໃກ້ຊິດກັບພຣະອົງ. ສົນທະນາ: ບັນດາຜູ້ທີ່ເຊື່ອຈະສາມາດຮູ້ໄດ້ຢ່າງໃດວ່າການອະທິຖານຂອງເຂົາເຈົ້າຢູ່ໃນເສັ້ນທາງພຣະປະສົງຂອງພຣະເຈົ້າ (ສິ່ງທີ່ພຣະເຈົ້າໄດ້ຊົງເປີດເຜີຍຢູ່ໃນພຣະທັມຂອງພຣະອົງ)

<u>ຄຳຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະທັມ:</u> (ເອເຟໂຊ 3:16-21)

1. ການມີພຣະວິນຍານຂອງພຣະເຈົ້າຢູ່ໃນຕົວທ່ານນັ້ນມີຄວາມໝາຍແນວໃດ?
2. ແມ່ນຫຍັງເປັນສິ່ງທີ່ຫຍຸ້ງຍາກໃນການປະສົບການຂອງທ່ານ? ແມ່ນຫຍັງທີ່ທ່ານເພິ່ງພາແລະໄວ້ວາງໃຈທີ່ສຸດທີ່ໃນຣິດອຳນາດຂອງພຣະເຈົ້າຈົນມາເຖິງປະຈຸບັນນີ້?
3. ມີທາງໃດແດ່ທີ່ຜູ້ເຊື່ອສາມາດນຳຄົນໃຫ້ເຂົ້າໃຈຄວາມຮັກຂອງພຣະເຈົ້າ ແລະຣິດອຳນາດອັນຍິ່ງໃຫຍ່ຂອງພຣະອົງ?

## <u>ບົດຮຽນພຣະຄັມພີແຫ່ງຄວາມຈິງ</u>

- ຜູ້ທີ່ເຊື່ອທັງຫລາຍສາມາດຮູ້ຈັກຣິດອຳນາດອັນຍິ່ງໃຫຍ່ຂອງພຣະເຈົ້າທີ່ມີຢູ່ໃນຕົວເຂົາ, ຊຶ່ງເປັນຣິດອຳນາດເໝືອນກັນຣິດອຳນາດທີ່ພຣະອົງຊົງໃຫ້ພຣະເຢຊູຄືນຂຶ້ນມາຈາກຕາຍ.
- ຄົນທັງຫລາຍໄດ້ຮັບຄວາມລອດພົ້ນໂດຍຣິດອຳນາດຂອງພຣະເຈົ້າໂດຍຄວາມເຊື່ອໃນພຣະເຢຊູຄຣິດ.
- ພຣະເຈົ້າຊົງເຕີມພຣະວິນຍານເຂົ້າໄປໃນຕົວຂອງເຂົາເພື່ອເຂົາຈະໄດ້ເຂົ້າໃຈຄວາມຮັກຂອງພຣະອົງ ແລະໂດຍພຣະອົງຊົງສະຖິດຢູ່ນຳ.

( ອຸປຖັມໂດຍ ລາວຊາວເທີນບັບຕິສສັມພັນ www.lsbf.org ແປ ແລະຮຽບຮຽງໂດຍ JH )